ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໗໔/ປພຖຊ/໐໗໑໗໐໙**

# ບົດຄວາມ

## ເປີດຕູ້ໜັງສືຮ້ອງທຸກຂ໌.

ຄນະກັມການກວດກາແຫ່ງຣັດ ມີແຜນເປີດຕູ້ຮັບຈົດໝາຍຮ້ອງທຸກ ຂຶ້ນທຸກຫົນທຸກແຫ່ງໃນທົ່ວປະເທດ. ໂດຍອ້າງວ່າ "ເພື່ອເປີດໂອກາດ ໃຫ້ປະຊາຊົນ ຂຽນຈົດໝາຍຮ້ອງທຸກຂ໌ ກ່ຽວກັບການ ສໍ້ຣາດ-ບັງຫລວງ ຂອງຄນະຣັຖບານ, ຣັຖກອນ ທີ່ສ້າງຄວາມເດືອດຮ້ອນໃຫ້ປະຊາຊົນ.

ທ່ານ ທອງສີ ອ້ວນຣາສີ ຮອງປະທານກັມການ ກວດກາແຫ່ງຣັດ ວ່າຈະໃຊ້ຂໍ້ມູນການຮ້ອງທຸກ ຂອງປະຊາຊົນນີ້, ເພື່ອດຳເນີນການສືບສວນ, ສອບສວນຫາຂໍ້ເທັດຈິງ, ກ່ຽວກັບພຶດຕິກັມຂອງເຈົ້າໜ້າທີ່ຣັດ ເພື່ອນຳມາລົງໂທດ ຕາມກົດໝາຍ.

ກ່ຽວກັບ ການສໍ້ຣາດ-ບັງຫລວງນີ້ ,ຄນະກັມການຮູ້ດີວ່າ ມັນແມ່ນພຍາດຕິດແປດຮ້າຍແຮງຊນິດນຶ່ງ ໄດ້ແຜ່ຣະບາດໄປທົ່ວທຸກຂແນງການ ຂອງພັກຣັດ, ບໍ່ມີຢາຊນິດໃດ ມາປິ່ນປົວໃຫ້ຫາຍເປັນປົກະຕິໄດ້, ນອກຈາກ ການຜ່າຕັດເທົ່ານັ້ນເອງ!. ສນັ້ນ, ຄນະກັມການ ຈຶ່ງໃຊ້ແຜນຕົວະຍົວະຫລອກລວງປະຊາຊົນ ດ້ວຍວິທີຕ່າງໆກັນໄປ ເພື່ອແກ່ຍາວອຳນາດຜເດັດການໃຫ້ມີອາຍຸສືບຕໍ່ໄປ.

ການເປີດຕູ້ຮັບຈົດໝາຍຮ້ອງທຸກ ຂອງ ຄນະກັມການກວດກາແຫ່ງຣັດ, ບໍ່ແມ່ນການແກ້ໄຂຕົ້ນຕໍ ຂອງບັນຫາ, ໃນເມື່ອຄນະກັມການກົມການເມືອງສູນກາງພັກ ເປັນຜູ້ພາເຮັດພາທຳກ່ອນ.. ຕົວຢ່າງ: ທ່ານ ຄຳໄຕ ສີພັນດອນ, ທ່ານ ຈູມະລີ ໄຊຍະສອນ, ທ່ານ ສີສວາດ ແກ້ວບຸນພັນ, ທ່ານ ບຸນຍັງ ວໍຣະຈິດ, ທ່ານ ບຸນຕຽມ ພິສມັຍ ແລະຜູ້ອື່ນໆອີກ ມີເງິນຝາກໄວ້ທະນະຄານຕ່າງປະເທດ ຜູ້ລະຫລາຍຮ້ອຍລ້ານດອນລາສະຫະຣັດ, ຊຶ່ງເງິນຕ່າງໆເຫລົ່ານີ້ໄດ້ມາຈາກສິນບົນ,

ການປັກຫລັກໝາຍຊາຍແດນ, ການໃຫ້ສຳປະທານຂຸດຄົ້ນບໍ່ແຮ່ໂລຫະ, ສຳປະທານປູກຕົ້ນໄມ້ອຸດສະຫະກຳ, ສ້າງເຂື່ອນໄຟຟ້າ ດັ່ງນີ້ເປັນຕົ້ນ. ມີໜ່ວຍສະເພາະກິດກຳກັບເປັນພິເສດໃນການເອົາເງິນເຂົ້າທະນາຄານສ່ວນຕົວ ຂອງຜູ້ນຳໃນຕ່າງປະເທດ ເປັນຜູ້ຈັດການ. ຄນະກັມການຈະແກ້ໄດ້ຢ່າງໃດ? -ການເປີດຕູ້ຮ້ອງທຸກ, ກໍ່ເປັນພຽງການຜ່ອນເບົາ ການກ່າວໂຈມຕີ ຂອງປະຊາຊົນແລະຜູ້ແທນໃນ ສະພາ ເທົ່ານັ້ນເອງ. ແຕ່ກໍ່ເຮັດຫຍັງບໍ່ໄດ້! ເພາະຕົ້ນຕໍ່ຂອງບັນຫາແມ່ນຢູ່ນຳຄນະພັກຣັດ. ສນັ້ນ, ຕ້ອງປ່ຽນຣັຖບານ ຈຶ່ງຈະແກ້ໄຂບັນຫານີ້ໄດ້. Sources: COMMONDWEALTH BANK (Ministere des banques central d'Australia Banque PHANITH en Thailande puis Banque Central SRI-AYUTHAYA en Thailande. Diffuser et Editer par le journal PHENDINLAO Europe No. 004-Avril 2001).

ພວກເຮົາ ຢ່າໄດ້ຫລົງເຊື່ອໃນອຸບາຍ ເປີດຕູ້ ຮັບຈົດໝາຍຮ້ອງທຸກ ຂອງປະຊາຊົນ, ເພາະໂຄງການນີ້, ສ້າງເງື່ອນໄຂ ຂໍການຊ່ວຍເຫລືອລ້າ ຈາກອົງການຈັດຕັ້ງຕ່າງໆ ທັງພາກຣັດ ແລະເອກຊົນເພື່ອຈະໄດ້ການຊ່ວຍເຫລືອລ້ານັ້ນ ມາແບ່ງປັນກັນ.

ຖ້າຢາກເອົາຜູ້ກະທຳຜິດ ມາລົງໂທດແທ້ໆນັ້ນ, ກໍບໍ່ຈຳເປັນຈະລໍຖ້າ ຮັບໃບຮ້ອງທຸກ ຂອງປະຊາຊົນ, ໃນເມື່ອ ອົງການກວດສອບແຫ່ງຊາດ ໄດ້ລາຍງານໄປແລ້ວວ່າ ມີການສໍ້ຣາດ ໃນຈຳນວນ 127 ຂແນງການ, ມີເຖິງ 70 ຕື້ກີບ ແລະ 2,600.000 ດອນລາສະຫະຣັດ.- ເກັບຄືນ ໄດ້ແຕ່ 2 ຕື້ກີບເຄິ່ງ ແລະ 125,500 ດອນລາສະຫະຣັດ. ສ່ວນເຫລືອຄ້າງນັ້ນ, ຢູ່ນຳຜູ້ໃດ ກໍຕ້ອງເອົາຜູ້ນັ້ນມາດຳເນີນຄະດີ ຈຶ່ງຈະຖືກຕ້ອງ.

ພວກເຮົາ ປະຊາຊົນພົກ ແລະກຳລັງທັບເສຣີປະຊາທິປະໄຕລາວ ຮຽກຮ້ອງມາຍັງເພື່ອນຮ່ວມຊາດທຸກຄົນ ຢ່າໄດ້ຫລົງເຊື່ອ ໃນກົລອຸບາຍເປີດຕູ້ສົ່ງຈົດໝາຍຮ້ອງທຸກນີ້, ເພາະມັນແມ່ນ ວິທີການສຳຣວດຄວາມຄິດ ຄວາມເຫັນ ຂອງປະຊາຊົນ ທີ່ພັກຣັດຕ້ອງການຢາກຮູ້ ວ່າ ແມ່ນໃຜ ຍັງຕ້ານພັກຕ້ານຣັດຢູ່? ກ່ອນທີ່ຈະ ປາບປາມ ດັບສູນ. ພ້ອມດຽວກັນນີ້, ພວກເຮົາ ກໍຮຽກຮ້ອງມາຍັງອົງການຈັດຕັ້ງສາກົນຕ່າງໆ ຢ່າໄດ້ໃຫ້ ການຊ່ວຍເຫລືອ ໃນໂຄງການນີ້ຕື່ມ, ເພາະມັນເປັນການສົ່ງເສີມ ໃຫ້ມີການສໍ້ຣາດ-ບັງຫລວງຢ່າງບໍ່ມີວັນ ສິ້ນສຸດລົງໄດ້!, ແຕ່ລະປີ, ຕ່າງປະເທດ ໃຫ້ການຊ່ວຍເຫລືອລາວ ບໍ່ຕໍ່າກວ່າ 400,000,000 ລ້ານດອນລາສະຫະຣັດ. ແຕ່, 20-25% ຖືກສໍ້ໂກງໄປເຂົ້າຖົງສ່ວນຕົວຂອງຄນະພັກຄນະບັນຊາທັງນັ້ນ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໗ ສິງຫາ ໒໐໐໙.**